# ສະໝອງພິການ

*ສະໝອງພິການ ຫຼື ຊີພີ ແມ່ນຫຍັງ?*

ສະໝອງພິການ ຫລື ເອີ້ນອີກຢ່າງໜຶ່ງວ່າ ຊີພີ, ແມ່ນອາການທີ່ມີສາເຫດມາຈາກພາກສ່ວນໃດໜຶ່ງຂອງສະໝອງທີ່ຄວບຄຸມການເຄື່ອນເໜັງຂອງກ້າມເນື້ອຖືກທຳລາຍ. Cerebral ແມ່ນກ່ຽວກັບສະໝອງ. Palsy ໝາຍເຖິງບັນຫາ ຫຼື ຈຸດບົກຜ່ອງກ່ຽວກັບການໃຊ້ກ້າມເນື້ອ. ການບາດເຈັບຈະເກີດຂຶ້ນກ່ອນການເກີດ, ບາງຄັ້ງຢູ່ໃນຊ່ວງການເກີດ, ຫຼື ຫຼັງການການເກີດພຽງບຶດດຽວ.

ຊີພີອາດຈະມີອາດການເບົາ, ປານກາງ, ຫຼື ໜັກ. ຊີພີທີ່ເບົາ ອາດຈະໝາຍເຖິງເດັກນ້ອຍໄດ້ຮັບຜົນກະທົບໜ້ອຍໜຶ່ງ. ຊີພີປານກາງ ອາດຈະໝາຍເຖິງເດັກນ້ອຍຍ່າງຂາເຄ. ລາວອາດຈະຕ້ອງການຂາທຽມ ຫຼື ໄມ້ຄ້ຳ. ຊີພີໜັກສາມາດສົ່ງຜົນກະທົບຕໍ່ກັບຄວາມສາມາດເຄື່ອນເໜັງທາງຮ່າງກາຍຂອງເດັກ. ເດັກນ້ອຍທີ່ເປັນ ຊີພີປານກາງ ຫຼື ໜັກ ອາດຈະຕ້ອງໃຊ້ລໍ້ ຫຼື ອຸປະກອນພິເສດຊ່ວຍ.

ບາງຄັ້ງເດັກນ້ອຍທີ່ເປັນ ຊີພີ ກໍ່ມີບັນຫາດ້ານການຮຽນ, ການຟັງ ແລະ ການເບິ່ງ (ບັນຫາດ້ານປະສາດສຳຜັດ), ຫຼື ມີຄວາມບົກຜ່ອງທາງສະຕິປັນຍາ. ໂດຍປົກກະຕິແລ້ວ, ເມື່ອສະໝອງຖືກທຳລາຍຫຼາຍເທົ່າໃດ, ອາການຊີພີກໍ່ຈະໜັກຂຶ້ນຕາມກັນ. ເຖິງຢ່າງໃດກໍ່ຕາມ, ສະໝອງພິການ ຈະບໍ່ຊຸດລົງຕາມການເວລາ ແລະ ເດັກນ້ອຍທຸກຄົນທີ່ມີສະໝອງພິການມີອາຍຸຍືນຕາມປົກກະຕິ.

*ແມ່ນຫຍັງທີ່ເປັນສັນຍານບົ່ງບອກວ່າເປັນສະໝອງພິການ?*
ສະໝອງພິການ ມີຢູ່ 4 ປະເພດຫຼັກຄື:

- ອຳມະພາດທາງສະໝອງ (Spastic CP) ແມ່ນບ່ອນທີ່ກ້າມເນື້ອຝືດຫລາຍເກີນໄປ. ການເຄື່ອນເໜັງຍາກໂດຍສະເພາະຢູ່ຂາ, ແຂນ, ແລະ/ຫຼື ຫຼັງ. ເດັກນ້ອຍທີ່ເປັນ ອຳມະພາດທາງສະໝອງ ເຄື່ອນເໜັງຂາແບບປະຫຼາດ, ປິ່ນຂາເຂົ້າ ຫຼື ໄຂວ່ຂາໃນເວລາທີ່ພວກເຂົາພະຍາຍາມຍ່າງ. ຊີພີປະເພດນີ້ກວມເອົາປະມານ 50-75% ຂອງຊີພີທັງໝົດ.

- Athetoid CP ( ຫຼື dyskinetic CP), ເອເຕິທອຍ ຊີພີ ມັນສາມາດສົ່ງຜົນກະທົບຕໍ່ກັບການເຄື່ອນເໜັງທັງໝົດຂອງຮ່າງກາຍ. ຕາມທຳມະດາແລ້ວ, ຊີພີປະເພດນີ້ກ່ຽວພັນກັບ ການເຄື່ອນເໜັງຂອງຮ່າງກາຍ ແລະ ກ້າມເນື້ອພາກສ່ວນລຸ່ມທີ່ຊັກຊ້າ ແລະ ບໍ່ສາມາດຄວບຄຸມໄດ້ ເຊິ່ງເຮັດໃຫ້ບຸກຄົນນັ້ນນັ່ງ ແລະ ຍ່າງຊື່ຍາກ. ຊີພີປະເພດນີ້ກວມເອົາ 10-20%.

- Ataxic CP, ອາເທັກຊິກຊີພີ: ຊີພີປະເພດນີ້ ກ່ຽວພັນກັບການປະສານງານຂອງຮ່າງກາຍທີ່ຍາກ, ຫາຄວາມສົມດຸ່ນຍາກ ແລະ ຍາກທີ່ຈະເຂົ້າໃຈຄວາມຄິດຢ່າງເລິກເຊິ່ງ ແລະ ມັນກວມເອົາ ປະມານ 5-10%.

- ຊີພີປະສົມ ແມ່ນການປະສົມປະສານກັນຂອງອາການທີ່ໄດ້ເວົ້າມາຂ້າງເທິງ. ເດັກນ້ອຍທີ່ເປັນຊີພີປະສົມຈະມີທັງກ້າມເນື້ອເຄັ່ງ ແລະ ຍານ. ກ້າມເນື້ອບາງສ່ວນຈະເຄັ່ງແໜ້ນ, ແລະ ສ່ວນອື່ນຈະຫລົມຍານເກີນໄປ, ເຮັດໃຫ້ເກີດມີການເຄື່ອນເໜັງຍາກ ແລະ ເປັນໄປຕາມທີ່ຕ້ອງການບໍ່ໄດ້.

ຄຳສັບເພີ່ມເຕີມສຳລັບອະທິບາຍແຕ່ລະຊະນິດທີ່ແຕກຕ່າງຂອງຊີພີລວມມີ:

- Diplegia (ດາຍພລີເຈຍ) ໝາຍເຖິງ ມີພຽງແຕ່ຂາເທົ່ານັ້ນທີ່ໄດ້ຮັບຜົນກະທົບ.
- Hemiplegia (ເຮມີພລີເຈຍ) ໝາຍເຖິງເຄິ່ງໜຶ່ງຂອງຮ່າງກາຍ (ເຊັ່ນແຂນ ແລະ ຂາຂວາ) ໄດ້ຮັບຜົນກະທົບ.
- Quadriplegia (ຄວາດຣິພລີເຈຍ) ໝາຍເຖິງ ທັງແຂນ ແລະ ຂາໄດ້ຮັບຜົນກະທົບ, ບາງຄັ້ງກໍ່ລວມທັງພາກສ່ວນກ້າມໜ້າຂອງໃບໜ້າ ແລະ ລຳຕົວ.

ຂໍ້ມູນນີ້ໄດ້ນຳເອົາມາຈາກ ສູນໂຄສະນາແຫ່ງຊາດສຳລັບເດັກນ້ອຍພິການ